# ບົດທີ 4

# ຕົ້ນເດື່ອເທດທີ່ບໍ່ມີໝາກ



*ທຳມະດາພະເຢຊູສະແດງລັກສະນະຢ່າງສຸພາບແລະຢ່າງມີຄວາມຮັກດ້ວຍ ແຕ່ມາເຖິງວັນຈັນໃນ ອາທິດສຸດທ້າຍນີ້ ພະອົງສະແດງພະພິໂລດຂອງພະເຈົ້າສອງເທື່ອ.*

ກ່ອນຈະເລີ້ມຕົ້ນຮຽນບົດນີ້ ເຮົາຈະຮຽນຄືນເລື່ອງທີ່ຮຽນມາກ່ອນ
ແລ້ວທ່ານໄດ້ຮຽນມາເລື່ອງເຫດການໃນອາທິດສຸດທ້າຍກ່ອນພະອົງຕາຍ.

**1** ກ. ໃນວັນສຸກກ່ອນ ພະອົງມາເຖິງບ້ານໃຜ? __________ __________ ແລະ ________

ຂ. ວັນເສົາເຂົາແຕ່ງຫຍັງໃຫ້ພະອົງ? ______________________________

ຄ. ໃນວັນອາທິດພະອົງເຂົ້າກຸງເຢລູຊາເລັມຢ່າງໃດ? ______________________

ງ. ວັນຈັນພະອົງປ້ອຍຫຍັງ? ______________________________

ແລະຊົງຊຳລະຫຍັງ? ______________________________

## ວັນຈັນ: ຊົງປ້ອຍຕົ້ນເດື່ອເທດ

**2** ໃຫ້ອ່ານ ມັດທາຍ 21:18-22 ແລ້ວຕອບຄຳຖາມຕໍ່ໄປນີ້ດ້ວຍວິທີສັງເກດ.

ກ. ພະອົງເຫັນຕົ້ນຫຍັງຢູ່ແຄມທາງ? ______________________________

ຂ. ພະອົງເຫັນວ່າມີຫຍັງ? ______________________________

ຄ. ຂາດບໍ່ມີຫຍັງ? ______________________________

ງ. ພະອົງຈຶ່ງກ່າວຢ່າງໃດ? ______________________________

ຈ. ໃນທັນໃດນັ້ນຕົ້ນເດື່ອເປັນຢ່າງໃດ? ______________________________

ສ. ເຫດການນີ້ຕົກໃນວັນໃດ? ______________________________

**3** ເບິ່ງຄືມັດທາຍບໍ່ໄດ້ບັນທຶກເຫດການເຫຼົ່ານັ້ນລຽງຕາມລຳດັບເວລາ ແຕ່ມາລະໂກລາຍງານຕາມລຳດັບຫຼາຍກວ່າ. ໃນມາລະໂກ 11:12 ຕໍ່ໄປ ເຫັນວ່າພະອົງຊົງປ້ອຍຕົ້ນເດື່ອເທດກ່ອນຈະຊຳລະຫຍັງ? ____________________

**4** ເລື່ອງຕົ້ນເດື່ອເທດນີ້ກໍເຂົ້າໃຈຍາກ ດັ່ງນັ້ນເຮົາຕ້ອງໃຊ້ວິທີຕີຄວາມໝາຍໃນພະຄຳພີ. ຕາມໃນມາລະໂກ 11:13 ເຫັນ ວ່າຍັງບໍ່ເຖິງລະດູໝາກ ຖ້າຢ່າງນັ້ນເຮົາບໍ່ເຂົ້າໃຈສາເຫດທີ່ພະອົງປ້ອຍກ່ອນ. ຕາມທຳມະດາໝາກເດື່ອເທດຈະສຸກໃນເດືອນພຶດສະພາ ແຕ່ເທດສະການປັດສະຄານີ້ຕົກໃນເດືອນໃດ? ____________________

**5** ລັກສະນະຂອງເດື່ອເທດນັ້ນໝາກມັນປາກົດມາກ່ອນໃບ, ມາລະໂກ 11:13 ບອກວ່າມີໃບແລ້ວແຕ່ບໍ່ເຫັນມີໝາກປາກົດມາເທື່ອ.

ກ. ແມ່ນຫຍັງທີ່ປາກົດມາກ່ອນໝາກເດື່ອເທດ ຫຼືໃບມັນ? ____________________

ຂ. ຖ້າເຫັນມີໃບແລ້ວຄວນຈະມີຫຍັງກ່ອນ? ____________________

**6** ມີໃບແລ້ວແຕ່ບໍ່ມີໝາກເທື່ອສະແດງວ່າມັນຕົວະແກ້ງເຮັດວ່າມີໝາກແຕ່ທີ່ຈິງບໍ່ມີ. ຕົ້ນທີ່ພະເຢຊູຊົງປ້ອຍນັ້ນເປັນຢ່າງໃດ? (ເລືອກ)

ກ. ສະແດງຂ້າງນອກຕາມຄວາມຈິງ

ຂ. ສົມບູນຂ້າງນອກ ແຕ່ທີ່ຈິງບໍ່ມີຫຍັງ

ຄ. ບໍ່ສະແດງຫຍັງຂ້າງນອກ

**7** ການອັດສະຈັນນີ້ ແຕກຕ່າງກັນກັບການອັດສະຈັນທົ່ວໄປທີ່ພະອົງກະທຳ

ກ. ເທື່ອໃດທີ່ເຂົາເອົາຄົນເຈັບປ່ວຍມາພະອົງເຮັດຫຍັງ? ____________________

ຂ. ເທື່ອໃດທີ່ເຂົາຂາດບໍ່ມີກິນ ພະອົງເຮັດຫຍັງ? (ມທ 14:20) ____________________

ຄ. ແຕ່ໃນເທື່ອນີ້ ພະອົງປ້ອຍຕົ້ນນັ້ນເຖິງຂະໜາດໃດ? (ເລືອກ)

______ ບໍ່ໃຫ້ມີໝາກຫຼາຍໃນປີນັ້ນ

______ ບໍ່ໃຫ້ມີໝາກເລີຍໃນປີນັ້ນ

______ ບໍ່ໃຫ້ມີໝາກອີກຈັກເທື່ອ

**8** ການອັດສະຈັນນີ້ ຕ່າງກັນກັບການອັດສະຈັນທົ່ວໄປທີ່ພະອົງກະທຳເພາະການອັດສະຈັນອື່ນໆນັ້ນ ເປັນການໃຫ້ພອນຢ່າງໜຶ່ງຢ່າງໃດ, ແຕ່ການອັດສະຈັນນີ້ເປັນຢ່າງໃດ? (ເລືອກ)

ກ. ການໂຜດໃຫ້ດີ

ຂ. ການທຳໂທດ

*ໃຫ້ທ່ານສັງເກດວ່າບາງເທື່ອພະເຈົ້າຕີສອນເຮົາ ແຕ່ມີບາງເທື່ອທີ່ພະເຈົ້າທຳໂທດດ້ວຍ.*

**9** ມີແຕ່ເທື່ອດຽວທີ່ພະອົງທຳໂທດໃນການອັດສະຈັນຄືໃນໂອກາດໃດ? ____________________

**10** ແມ່ນເພາະສາເຫດໃດທີ່ພະອົງຊົງປ້ອຍຕົ້ນເດື່ອເທດນັ້ນ? ____________________

**11** ໃນ ລູກາ 13:6-9 ມີຄຳອຸປະມາທີ່ພະເຍຊູກ່າວເລື່ອງຕົ້ນເດື່ອເທດອີກ

ກ. ເຈົ້າຂອງສວນມາຊອກຫາຫຍັງ? ____________________________________

ຂ. ຖ້າຄົນງານຂຸດດິນອ້ອມເອົາຝຸ່ນໃສ່ແລ້ວແຕ່ຍັງບໍ່ເກີດມີໝາກຕໍ່ໄປຈຳເປັນຈະຕ້ອງເຮັດຫຍັງ? ____________________________________

**12** ທີ່ພະອົງປ້ອຍຕົ້ນເດື່ອເທດໃນວັນຈັນນັ້ນຄ້າຍຄືກັນ. ເວົ້າເລື່ອງດຽວກັນກັບຄຳອຸປະມາແຕ່ເປັນເລື່ອງຈິງຢູ່.

ກ. ຕົ້ນເດື່ອເທດມີຈຸດປະສົງໃຫຍ່ແຕ່ປະການດຽວຄືຫຍັງ? ________________________

ຂ. ຖ້າບໍ່ມີໝາກເລີຍບໍ່ມີປະໂຫຍດຈຶ່ງຕ້ອງເຮັດຫຍັງ? ________________________

**13** ກ.ເລື່ອງທີ່ພະອົງປ້ອຍຕົ້ນເດື່ອເທດຢູ່ໃນ ມັດທາຍບົດໃດ? ________________________

ຂ. ຄຳອຸປະມາເລື່ອງຕົ້ນເດື່ອເທດຢູ່ໃນ ລູກາບົດໃດ? ________________________

**14** ການອັດສະຈັນໃນຂ່າວປະເສີດສ່ວນຫຼາຍກ່າວເຖິງທີ່ພະອົງໂຜດໃຫ້ດີ ແຕ່ການອັດສະຈັນທີ່ພະອົງປ້ອຍຕົ້ນເດື່ອເທດຕ່າງກັນຢ່າງໃດ? ________________________________

**15** ໃຫ້ອ່ານ ມັດທາຍ 7:15-20

ກ. ຕົ້ນທີ່ດີຈະເກີດມີຜົນຢ່າງໃດ? ____________________________________

ຂ. ໄມ້ທຸກຕົ້ນທີ່ບໍ່ເກີດໝາກຕ້ອງຖືກຫຍັງ? ________________________________

**16** ໃຫ້ອ່ານຄຳເວົ້າຂອງໂຢຮັນບັບຕິສະໂຕໃນມັດທາຍ 3:8 ຈົ່ງປະຕິບັດໃຫ້ໄດ້ຜົນສົມກັບຫຍັງ?

____________________________________________________________

**17** ຜູ້ໃດທີ່ຖິ້ມໃຈເກົ່າເອົາໃຈໃໝ່ຈະເກີດມີຜົນຫຍັງ? ____________________________

**18** ກ. ກັບໄປຮັບພິຈາລະນາເລື່ອງຕົ້ນເດື່ອເທດໃນມັດທາຍ 21. ຕົ້ນນັ້ນມີໃບແຕ່ບໍ່ມີຫຍັງ? ___

ຂ. ປຽບຄືຄົນທີ່ອ້າງວ່າເປັນຄຼິດສະຕຽນແຕ່ບໍ່ຖິ້ມຫຍັງ? ________________________

**19** ຕົ້ນເດື່ອເທດໃນມັດທາຍ 21 ປຽບເໝືອນຊາດຢິວ, ພວກຄົນຢິວນັ້ນເຮັດຄືຄົນຖືສາດສະໜາຢ່າງເຂັ້ມງວດ.

ກ. ໃນ ມທ 6:5 ເຂົາເຮັດຫຍັງເພື່ອຈະໃຫ້ຄົນເຫັນ? ____________________________

ຂ. (ມທ 6:16) ເຂົາມັກຖືສິນອົດຫຍັງ? ____________________________________

ຄ. (ມທ 23:15) ເຂົາຈະທຽວທາງນ້ຳທາງບົກເພື່ອໃຫ້ຄົນເຂົ້າຫຍັງ? ______________

ງ. (ໂລມ 2:18) ເຂົາຮຽນຮູ້ຫຍັງ? ________________________________________

ຈ. ພວກນັກທຳແລະພວກຟາລີຊາຍເຄີຍນັ່ງບ່ອນນັ່ງຂອງໃຜ? (ມທ 23:2) ___________

ສ. ເຂົາສ້າງຫຍັງເພື່ອນະມັດສະການພະເຈົ້າ? ________________________________

ຊ. ເຂົາເຄີຍຖະຫວາຍຫຍັງໃນພະວິຫານ? ____________________________________

**20** ເຖິງເຂົາມີໜ້າທີ່ຖືສາດສະໜາຢ່າງເຂັ້ມງວດປານນັ້ນກໍຕາມແຕ່ໃນມັດທາຍ 23:3 ເຫັນວ່າເຂົາເຮັດຕາມບໍ່? ______________________________________________

**21** ຖ້າຈະຕີຄວາມໝາຍຈາກການປ້ອຍຕົ້ນເດື່ອເທດ

ກ. ການກະທຳດ້ານສາດສະໜາທີ່ເຫັນກັບຕາປຽບດ້ວຍຫຍັງ? ____________________

ຂ. ການຖິ້ມໃຈເກົ່າແລະເອົາໃຈໃໝ່ພ້ອມດ້ວຍການປະຕິບັດປຽບດ້ວຍຫຍັງ? __________

**22** ຕົ້ນເດື່ອເທດປຽບທຽບກັບຊາດໃດ? ______________________________________

**23** ຊາດຢິວມັກເນັ້ນຄໍາຢ່າງໃດ? (ເລືອກ)

ກ. ການກະທຳດ້ານສາດສະໜາ ຂ. ການເຊື່ອຟັງພະເຈົ້າ

ຄ. ການປະຕິບັດ

**24** ກ.ໃບໃນຕົ້ນເດື່ອເທດປຽບທຽບຫຍັງ? ______________________________________

ຂ. ໝາກປຽບທຽບຫຍັງ? ______________________________________________

**25** ກ.ໃນເອຊາຢາ 5:1-7 ແມ່ນຫຍັງທີ່ປຽບທຽບຊາດຢິວ? ___________________________

ຂ.ໃນໂລມ 11:24 ອິດສະລາເອນປຽບກັບຕົ້ນຫຍັງ? _____________________________

**26** ກ. ພະຄໍາພີຍົກຕົ້ນໄມ້ສອງຊະນິດໃດມາປຽບກັບຊາດຢິວ? ________________________

ຂ. ຍົກຫຍັງອີກ? ______________________________________________

**27** ກ. ຄໍາອຸປະມາທີ່ວ່າດ້ວຍຕົ້ນເດື່ອເທດບໍ່ມີໝາກຢູ່ໃນພະທໍາໃດບົດໃດ? ______________

ຂ. ການອັດສະຈັນທີ່ວ່າດ້ວຍຕົ້ນເດື່ອເທດບໍ່ມີໝາກຢູ່ໃນພະທໍາໃດບົດໃດ? ____________

**28** ຊາດຢິວຄ້າຍຄືກັນກັບຕົ້ນເດື່ອເທດ ຊາດຢິວມີພິທີການຫຼາຍຢ່າງ ແຕ່ບໍ່ມີຜົນທີ່ເກີດມາຈາກການຖິ້ມໃຈເກົ່າເອົາໃຈໃໝ່.

ກ. ຕົ້ນເດື່ອເທດນັ້ນຂາດບໍ່ມີຫຍັງ? ______________________________________

ຂ. ມີສິ່ງໃດຢ່າງເຫຼືອເຟືອ? ______________________________________________

**29** ໃນວັນຈັນນັ້ນພະອົງທຳໂທດຕໍ່ຕົ້ນເດື່ອເທດດ້ວຍປ້ອຍມັນໃຫ້ຫ່ຽວແຫ້ງໄປ.

ກ. ໃນວັນດຽວກັນພະອົງຊໍາລະຫຍັງ? ______________________________________

ຂ. ຕາມລໍາດັບໃນຂ່າວປະເສີດມາລະໂກອັນໃດເກີດມາກ່ອນ? ____________________

**30** ສ່ວນຜູ້ຕິດຕາມພະອົງໃນປະຈຸບັນນີ້ ພະອົງຕ້ອງການໃຫ້ເຮົາເປັນຢ່າງໃດ? (ເລືອກ)

ກ. ເຮັດພິທີການຕ່າງໆ ໃຫ້ຄົນເຫັນວ່າເຮົາເປັນຄຣິດສະຕຽນ.

ຂ. ໃຫ້ເຮົາເລົ່າເລື່ອງພະເຈົ້າຢູ່ສະເໝີ ເຖິງວ່າເຮົາຍັງກະທຳບາບຢູ່ກໍຕາມ.

ຄ. ພະອົງຊົງຊໍາລະໃຈເຮົາ ແລະດໍາເນີນຊີວິດຢ່າງຄົນທີ່ຖິ້ມໃຈເກົ່າເອົາໃຈໃໝ່

**31** ໃຫ້ອ່ານມັດທາຍ 21:23. ໃນມື້ຕໍ່ໄປ ພະອົງເຂົ້າໄປໃສອີກ? _______________________
ໃນວັນນັ້ນຈະເກີດມີການໂຕ້ຖຽງກັນໃຫຍ່.

# ວັນອັງຄານ: ໂຕ້ຖຽງກັນໃນພະວິຫານ

**32** ໃຫ້ອ່ານມັດທາຍ 21:23-27



ກ. ແມ່ນສອງພວກໃດມາຖາມພະອົງ?

______________________________

ແລະ __________________________

ຂ. ຖາມເລື່ອງຫຍັງ? (ເລືອກ)

______ ສິດອຳນາດຂອງພະອົງ.

______ ນາມຂອງພະອົງ.

______ ສັນຊາດຂອງພະອົງ.

**33** ເຂົາຖາມພະອົງດັ່ງຕໍ່ໄປນີ້.

"ເຈົ້າມີສິດອັນໃດຈຶ່ງໄດ້ເຮັດການເຫຼົ່ານີ້ ໃຜໃຫ້ສິດນີ້ແກ່ເຈົ້າ?"

ກ. ໃນວັນອາທິດພະອົງເຮັດການໃດ? ______________________________

ຂ. ໃນວັນຈັນພະອົງປ້ອຍຫຍັງ? ______________________________

ແລະການຊຳລະຫຍັງ? __________________________________



**34** ໃນວັນອັງຄານນັ້ນ ພວກປະໂລຫິດໃຫຍ່ມາທ້າທາຍພະອົງເລື່ອງສິດອຳນາດ ແຕ່ພະອົງຕອບເຂົາດ້ວຍຍົກຄຳຖາມເລື່ອງໃຜ? ______________________________

ໃຫ້ທ່ານເປີດເບິ່ງຕາຕະລາງເລື່ອງການໂຕ້ຖຽງກັນໃນພະວິຫານຢູ່ໜ້າ 50. ໃນລຸ່ມຫ້ອງ "ຕົ້ນເຫດ" ໃຫ້ຂຽນ "ເຫດທີ່ໂຕ້ຖຽງກັນ" ໃຫ້ທ່ານຂຽນ ບົດແລະຂໍ້ທີ່ບັນທຶກເລື່ອງນັ້ນ ແລ້ວໃຫ້ຕື່ມຄວາມທີ່ຂາດໃນລຸ່ມຫ້ອງ "ວ່າດ້ວຍຫຍັງ" ແລະ "ຫຼັກຄຳສອນ"

**35** ໃຫ້ອ່ານມັດທາຍ 3:8-10

ກ. ໂຢຮັນບັບຕິສະໂຕສອນຜູ້ທີ່ຟັງວ່າຈິ່ງເຮັດຫຍັງ? ____________________________

______________________________________________________________

ຂ. ເພິ່ນສອນຊໍ້າວ່າໄມ້ທຸກຕົ້ນທີ່ບໍ່ເກີດຜົນຈະເປັນຢ່າງໃດ? ______________________

**36** ກ. ພະອົງຊອກຫາຫຍັງໃນຕົ້ນເດື່ອເທດ? __________________________________

ຂ. ເຫັນວ່າມີແຕ່ໃບບໍ່ມີໝາກພະອົງເຮັດຢ່າງໃດ? ____________________________

## ວັນອັງຄານ: ການໂຕ້ຖຽງໃນພະວິຫານ ມທ 21:23-22:46

| ຕົ້ນເຫດ | ບົດແລະຂໍ້ | ວ່າດ້ວຍຫຍັງ | ຫຼັກຄໍາສອນ |
|---|---|---|---|
| ເຫດທີ<br>ໂຕ້ຖຽງກັນ | | ເລື່ອງສິດອໍານາດ<br>ຂອງ ____________ | ພະເຢຊູ ປຽບຕົວເອງກັບ<br>_________ ບັບຕິສະໂຕ |
| ອຸປະມາເລື່ອງ<br>_________ | | ລາຊະແຜ່ນດິນຂອງ<br>____________ | (ຈາກ ບົດ 5 ຂໍ້ 5 ຂ.) |
| ອຸປະມາເລື່ອງ<br>_________<br>_________ | | | (ຈາກ ບົດ 5 ຂໍ້ 17) |
| ອຸປະມາເລື່ອງ<br>_________ | | | (ຈາກ ບົດ 5 ຂໍ້ 48) |
| ພວກ<br>_________<br>ບັນຫາທີ 1 | | ການເສຍ ____________ | ຂອງກາຍຊາຈິ່ງຖະຫວາຍໃຫ້____<br>ຂອງພະເຈົ້າຈິ່ງຖະຫວາຍໃຫ້ ____ |
| ພວກ<br>_________<br>ບັນຫາທີ 2 | | ການຄືນ ____________ | ພະອົງບໍ່ເປັນພະເຈົ້າຂອງຄົນ ____<br>ແຕ່ເປັນພະເຈົ້າຂອງຄົນ ______ |
| ພວກ<br>_________<br>ບັນຫາທີ 3 | | ພະບັນຍັດ ____________ | ຈິ່ງຮັກພະເຈົ້າໂດຍສຸດຫຍັງ?<br>_____________________ |
| ພວກ<br>_________<br>ບັນຫາທີ 4 | | ບຸດ _____________ | ພະເຢຊູເປັນ ____________ ຂອງ<br>ດາວິດ |

**37** ກ. ພວກປະໂລຫິດໃຫຍ່ປະຕິເສດອຳນາດຂອງໂຢຮັນບັບຕິສະໂຕບໍ່ໄດ້ເພາະວ່າເຂົາຢ້ານໃຜ?

______________________________________________________________

ຂ. ປະຊາຊົນຍິວຖືວ່າໂຢຮັນເປັນຜູ້ປະກາດຫຍັງ? ______________________________

ຄ. ທີ່ຈິງພວກປະໂລຫິດບໍ່ເຊື່ອໃນອຳນາດຂອງໂຢຮັນທັງບໍ່ເຊື່ອໃນອຳນາດຂອງພະເຢຊູດ້ວຍ. ດັ່ງນັ້ນເຂົາເຮັດຫຍັງ? (ເລືອກ)

_____ ບໍ່ຕອບເລີຍ _____ ບອກວ່າໂຢຮັນບັບຕິສະໂຕມີອຳນາດ.

_____ ບອກວ່າໂຢຮັນບັບຕິສະໂຕບໍ່ມີອຳນາດ.

ງ. ເຂົາບໍ່ຕອບພະເຢຊູ ພະເຢຊູກໍບໍ່ຍອມ ______________________________ ເຂົາ.



(ຕື່ມຄວາມທີ່ຂາດ)

ໝົດມື້ວັນອັງຄານ ພວກປະໂລຫິດໃຫຍກັບພວກເຖົ້າແກ່ໂຕ້ຖຽງກັບພະອົງແຕ່ເຂົາສູ້ພະເຢຊູບໍ່ໄດ້. ພະອົງຕອບເຂົາໄດ້ ໃນທຸກປະການຈົນກວ່າເຂົາບໍ່ສາມາດຖາມພະອົງຈັກຄຳອີກ.

**38** ພະເຢຊູຍົກຄຳອຸປະມາ ມາຕອບພວກປະໂລຫິດໃຫຍ່ເຊັ່ນ ຄຳອຸປະມາເລື່ອງລູກຊາຍສອງຄົນໃນມັດທາຍ 21:28-32

ກ. ໃນຄຳອຸປະມານັ້ນ ແມ່ນລູກຄົນໃດທີ່ປຽບທຽບກັບຊາດຍິວ? (ເລືອກ)

_____ ຜູ້ທີ່ບໍ່ຢາກໄປ ເມື່ອມີການປ່ຽນໃຈຈຶ່ງໄປ.

_____ ຜູ້ທີ່ບອກວ່າຈະໄປ ແຕ່ບໍ່ໄປ.

ຂ. ໃນຂໍ້ 31 ຜູ້ທີ່ວ່າຈະບໍ່ໄປເລີຍໄປ ປຽບກັບຄົນເກັບ __________ ແລະຍິງ _________

ຄ. ໃນຂໍ້ 32 ພະເຢຊູເວົ້າເລື່ອງຜູ້ໃດທີ່ມາສອນທາງສິນທຳ? ______________________

ງ. ໂຢຮັນເຄີຍສອນໃຫ້ເຂົາມີຜົນສົມກັບຫຍັງ? ______________________________

| ໃຫ້ທ່ານເອົາສໍສີແດງຂີດກ້ອງຄຳ “ລາຊະແຜ່ນດິນຂອງພະເຈົ້າ” ໃນຂໍ້ 31 |
|---|

**39** ພະອົງຍົກພືດພັນ 3 ຢ່າງໃດທີ່ປຽບທຽບຊາດຍິວ? (ຕື່ມຄວາມ)

ເຄືອ _______________ ຕົ້ນ _______________ ແລະຕົ້ນ ___________________

**40** ກ. ໃບຕົ້ນເດື່ອເທດ ປຽບທຽບກັບການກະທຳພິທີດ້ານສາດສະໜາຂອງຊາດໃດ? _______

ຂ. ຕົ້ນເດື່ອເທດຂາດບໍ່ມີໝາກ ຊາດຍິວຂາດບໍ່ມີຜົນທີ່ສົມກັບຫຍັງ? _______________

**41** ກ. ຈະຫາຄຳອຸປະມາເລື່ອງຕົ້ນເດື່ອເທດທີ່ບໍ່ມີໝາກໃນຂ່າວປະເສີດເຫຼັ້ມໃດບົດໃດ? _____

ຂ. ການອັດສະຈັນເລື່ອງຕົ້ນເດື່ອເທດທີ່ບໍ່ມີໝາກໃນຂ່າວປະເສີດເຫຼັ້ມໃດບົດໃດ? _______

**42** ກ. ໃນລູກາ 13:8 ຄົນງານຈະເຮັດຢ່າງໃດກັບຕົ້ນນັ້ນຈຶ່ງຈະໃຫ້ເກີດມີໝາກໃນປີຕໍ່ໄປ?

______________________________________________________________

ຂ. ໃນພະທຳ ເອຊາຢາ 5:2-4 ເຈົ້າຂອງສວນອະງຸ່ນເຮັດຢ່າງໃດໃຫ້ເກີດມີຜົນ? (ເລືອກ)

______ ເພິ່ນຂຸດດິນແລະປູກເບ້ຍອະງຸ່ນພັນດີໃສ່

______ ເພິ່ນປູກໄວ້ແລ້ວປະໄປ

______ ເພິ່ນປູກແຕ່ອະງຸ່ນສົ້ມ

ຄ. ໃຫ້ອ່ານ ໂລມ 9:4-5 ຕາມຂໍ້ນັ້ນ ພະເຈົ້າປະທານຫຼາຍ ຫຼືນ້ອຍໃຫ້ຊາດຢິວ? ________

ງ. ພະເຈົ້າປະທານຫຼາຍໃຫ້ຊາດຢິວ ຊາດຢິວເກີດມີຜົນດີບໍ່? ____________________

**43** ພະອົງປ່ອຍຕົ້ນເດື່ອທີ່ບໍ່ມີໝາກນັ້ນແລ້ວມັນກາຍເປັນຢ່າງໃດ? __________________

**44** ພະເຈົ້າປະທານຫຼາຍຢ່າງໃຫ້ຊາດຢິວແລ້ວພະອົງຫວັງວ່າຈະໄດ້ຜົນດີມາແຕ່ເຂົາກໍບໍ່ເກີດຜົນດີ. ເພາະເຫດນັ້ນ ພະອົງທຳໂທດໃສ່ເຂົາຫຼາຍເທື່ອໃນອາດີດ.

ກ. ຫຼາຍຮ້ອຍປີກ່ອນເຂົາຖືກເນລະເທດໄປໃສ? ____________________________

ຂ. ໃນປະມານປີໃດ? ______________________________________________

ຄ. ພະເຈົ້າຍັງຈະທຳໂທດໃຫ້ເຂົາອີກໃນປີ ຄ.ສ.ໃດ? _________________________

ງ. ແມ່ນທະຫານຂອງຈັກກະພັດໃດຈະມາທຳລາຍກຸງເຢລູຊາເລັມ? ______________

**45** ຫຼັງຈາກຈັກກະພັດໂລມມາທຳລາຍກຸງເຢລູຊາເລັມໃນປີ ຄ.ສ.70 ພວກຊາດຢິວຖືກກະຈັດກະຈາຍໄປທົ່ວໂລກ ຕະຫຼອດຊົ່ວໄລຍະ 1900 ປີ. ໃນປີ 1948 ທີ່ເຂົາມີປະເທດມາອີກ, ຕັ້ງແຕ່ປີໃດເຖິງປີໃດທີ່ບໍ່ມີປະເທດອິດ ສະລາເອນເລີຍ? ____________________________

**46** ໃນວັນດຽວນັ້ນຄືວັນອັງຄານ ພະອົງເທດສະໜາຢູ່ພູໝາກກອກເທດ ພະອົງເທດສະໜາເລື່ອງໝາຍສຳຄັນໃນອະນາຄົດ.

ກ. ໃນ ມທ 24:29-31 ພະອົງເວົ້າເລື່ອງຫຍັງ? ____________________________

ຂ. ໃນ ມທ 24:32 ພະອົງຍົກຕົ້ນເດື່ອເທດມາເປັນຕົວຢ່າງອີກ ແຕ່ບໍ່ແມ່ນຕົ້ນທີ່ຫ່ຽວແຫ້ງນັ້ນ. ກິ່ງກ້ານມັນເປັນຢ່າງໃດ? ________________________________________

**47** ກິ່ງກ້ານທີ່ແຕກໃບອ່ອນອອກໃຫ້ເຮົາມີຄວາມຄິດຢ່າງໃດ? (ເລືອກ)

ກ. ໝົດຫວັງ ຂ. ມີຄວາມຫວັງ ຄ. ການທຳໂທດ

**48** ຊາດຢິວຖືກກະຈັດກະຈາຍໄປທົ່ວໂລກ ເປັນການທຳໂທດຈາກພະເຈົ້າເພາະຄວາມບາບຂອງເຂົາແລະອີກທີ່ເຂົາບໍ່ຮັບຮູ້ພະເຢຊູເປັນຜູ້ທີ່ພະບິດາສັນຍາວ່າຈະມາເປັນຜູ້ຊ່ວຍ. ແຕ່ເຖິງຢ່າງນັ້ນກໍຕາມພະຄຳພີສັນຍາວ່າວັນຫຼັງພະເຈົ້າຈະ ມາສ້າງເຂົາຄືນໃໝ່ໃຫ້ເປັນປະເທດອີກ. ຂໍ້ພະຄຳພີໃດຕໍ່ໄປນີ້ອ້າງເຖິງທີ່ພະເຈົ້າຈະສ້າງເຂົາຄືນມາໃໝ່. (ເລືອກ)

ກ. ເອເຊກຽນ 36:24-25 ຂ. ໂຢຮັນ 3:16

ຄ. ອາໂມດ 9:13-15 ງ. ໂລມ 11:26

**49** ພະເຈົ້າສັນຍາວ່າໃນຍຸກສຸດທ້າຍຂອງໂລກນີ້ ຊາດຢິວຈະເປັນຢ່າງໃດ? _____________

**50** ຄຳສັນຍາຂອງພະເຈົ້າຕໍ່ຊາດຢິວປະກອບດ້ວຍສອງສ່ວນຄື:
* ເຂົາຈະຄືນເປັນປະເທດຢ່າງອຸດົມສົມບູນ.
* ເຂົາຈະຮັບຮູ້ພະບຸດທີ່ພະບິດາສັນຍາໄວ້ ແລ້ວຈະປະຄວາມບາບ.
ຊາດອິດສະລາເອນນັ້ນຖືກກະຈັດກະຈາຍໄປປະມານ1900 ປີແລ້ວ.ໃນທຸກວັນນີ້ສະພາບຂອງເຂົາເປັນຢ່າງໃດ
ກ. ເຂົາມີປະເທດຢ່າງອຸດົມສົມບູນແລ້ວ ຫຼືຍັງ? ________________________________
ຂ. ເຂົາຮັບຮູ້ພະເຢຊູແລ້ວ ຫຼືຍັງ? ________________________________________

**51** ພະຄຳພີສອນວ່າພະເຈົ້າສ້າງອິດສະລາເອນຄືນມາໃໝ່ໃນຍຸກສຸດທ້າຍຂອງໂລກນີ້. ການນັ້ນສະແດງວ່າຜູ້ໃດຈວນຈະກັບມາເທື່ອທີສອງ? ________________________________

**52** ເຫັນກິ່ງກ້ານແຕກໃບອ່ອນອອກມາເຮົາຮູ້ແລ້ວວ່າລະດູຮ້ອນມາໃກ້ແລ້ວ. ເຊັ່ນດຽວກັນ ເຫັນວ່າຊາດຢິວກັບໄປຕັ້ງ ປະເທດອິດສະລາເອນແລ້ວເຮົາຮູ້ແລ້ວວ່າການສະເດັດມາອີກຂອງ ______________________ ມາໃກ້ແລ້ວ. (ຕື່ມຄວາມ)

**53** ພະເຈົ້າສັນຍາວ່າໃນຍຸກສຸດທ້າຍຄືນອິດສະລາເອນຈະເປັນຢ່າງໃດ? _________________

**54** ເຖິງວ່າຊາດລາວກັບຊາດຢິວເປັນຄົນລະພາສາກໍຕາມ ແຕ່ຄົນລາວຮຽນຮູ້ຈາກປະຫວັດຊາດຢິວໄດ້. ຕັ້ງແຕ່ ປີ ຄ.ສ.70 ເຖິງ ປີ ຄ.ສ.1948 ເບິ່ງຄືອິດສະລາເອນຈະບໍ່ເປັນປະເທດອີກຈັກເທື່ອ, ແຕ່ໃນປີ 1948 ນັ້ນອິດສະລາເອນເປັນປະເທດອີກ. ເຊັ່ນດຽວກັບພວກເຮົາອາດຈະພົບບັນຫາທີ່ບໍ່ເຫັນທາງແກ້ ແຕ່ໃນ ມທ 21:21 ພະເຢຊູສອນວ່າ ສິ່ງທີ່ເບິ່ງຄືເປັນໄປບໍ່ໄດ້ອາດຈະເປັນໄປໄດ້ແກ່ຜູ້ທີ່ມີຄວາມ ____________ . (ຕື່ມຄວາມຂາດ)

**55** ໃນມັດທາຍ 21:22 ພະເຢຊູບອກວ່າ ຖ້າເຮົາອ້ອນວອນຂໍດ້ວຍມີຄວາມເຊື່ອເຮົາຈະໄດ້ຫຍັງ?
__________________________________________________________________

**56** ແຕ່ຍັງມີເງື່ອນໄຂຢູ່ ຄືເງື່ອນໄຂໃດ? (ເລືອກ)
ກ. ທີ່ເຮົາຈະໄປປະຊຸມທຸກອາທິດ ຂ. ທີ່ເຮົາຈະໄປຫາເງິນຫຼາຍໆ
ຄ. ທີ່ເຮົາຈະຂໍດ້ວຍຄວາມເຊື່ອ

**57** ບັດນີ້ ເຮົາຈະຮຽນດ້ວຍວິທີປຽບທຽບເລື່ອງດຽວກັນໃນ ມາລະໂກ 11:20-26.
ກ. ໃນຂໍ້ 24 ເວົ້າຄວາມດຽວກັນວ່າ ເຮົາຕ້ອງທູນຂໍຢ່າງໃດ? _______________________
ຂ. ໃນຂໍ້ 25 ແລະ 26 ມີເງື່ອນໄຂອີກປະການໃດ? ____________________________

**58** ພະເຢຊູຍົກເລື່ອງຕົ້ນເດື່ອທີ່ຫ່ຽວແຫ້ງເພື່ອໜູນໃຈໃຫ້ລູກສິດຂອງພະອົງມີທັງຄວາມເຊື່ອແລະຄວາມຮັກດ້ວຍ. ພະອົງຍົກເງື່ອນໄຂສອງປະການໃດກ່ອນພະເຈົ້າຈະຕອບຄຳອ້ອນວອນຂອງເຮົາ? (ຕື່ມຄວາມ)
ໃຫ້ມີຄວາມ ____________________ ແລະຍົກ _______________________ ໃຫ້ຜູ້ອື່ນ.

**59** ພະເຈົ້າລົງຄຳສັນຍາໃດຕໍ່ຊາດຢິວ? ____________________

**60** ຖ້າເຮົາມີບັນຫາໃດໃນຊີວິດທີ່ແກ້ໄຂບໍ່ຕົກ ເຮົາຄວນທູນຂໍຈາກພະເຈົ້າດ້ວຍມີຫຍັງພ້ອມ?

____________________

**61** ໃນບ່ອນຫວ່າງຕໍ່ໄປນີ້ໃຫ້ທ່ານຂຽນລົງວິທີທາງທີ່ຈະຍົກເລື່ອງຈິງມາໃຊ້ໃນຊີວິດຂອງທ່ານເອງ. (ຕໍ່ໄປນີ້ໃຫ້ສະເໜີມາໃນປະຊຸມ) ____________________

____________________

____________________

____________________

## ຄຳຕອບ:

**1** *ກ. ມາລີອາ ມາທາ ແລະລາຊະໂລ ຂ. ແຕ່ງການລ້ຽງໃຫ້ ຄ. ຢ່າງຜູ້ມີໄຊ ງ. ປ້ອຍຕົນເດື່ອເທດ ພະວິຫານ.*

**2** *ກ. ເດື່ອເທດ ຂ. ມີໃບເທົ່ານັ້ນ ຄ. ບໍ່ມີໝາກ ງ."ມຶງຢ່າໄດ້ເກີດໝາກຕໍ່ໄປຈັກເທື່ອ." ຈ. ຫ່ຽວແຫ້ງລົງ ສ. ວັນຈັນ*

**3** *ພະວິຫານ*

**4** *ເມສາ*

**5** *ກ. ໝາກ ຂ. ໝາກ*

**6** *ຂ ຖືກ*

**7** *ກ. ໂຜດໃຫ້ດີ ຂ. ໃຫ້ເຂົາກິນອີ່ມ ຄ. ບໍ່ໃຫ້ມີໝາກອີກຈັກເທື່ອ*

**8** *ຂ ຖືກ*

**9** *ທີ່ພະອົງປ້ອຍຕົນເດື່ອເທດ*

**10** *ບໍ່ມີໝາກ*

**11** *ກ. ຊອກຫາໝາກ ຂ. ປຳຖິ້ມເສຍ*

**12** *ກ. ເກີດມີໝາກ ຂ. ປຳຖິ້ມເສຍ (ທຳໂທດ)*

**13** *ກ. 21 ຂ. 13*

**14** *ເປັນການທຳໂທດ*

**15** *ກ. ພົນດີ ຂ. ປຳຖິ້ມໃສ່ໄຟເສຍ*

**16** *ການຖິ້ມໃຈເກົ່າເອົາໃຈໃໝ່*

**17** *ພົນດີ*

**18** *ກ. ໝາກ ຂ. ບໍ່ຖິ້ມໃຈເກົ່າເອົາໃຈໃໝ່*

**19** *ກ. ອ້ອນວອນ ຂ. ອົດອາຫານ ຄ. ເຊາສາດສະໜາ ງ. ພະບັນຍັດ ຈ. ໂມເຊ ສ. ພະວິຫານ ຊ. ແກະ*

**20** *ບໍ່ເຮັດຕາມ*

ຄຳຕອບ (ຕໍ່):

**21** *ກ. ໃບ ຂ. ຜົນ (ໝາກ)*

**22** *ຊາດຢິວ*

**23** *ກ ຖືກ*

**24** *ກ. ການກະທຳດ້ານສາດສະໜາ ຂ. ການຖິ້ມໃຈເກົ່າເອົາໃຈໃໝ່*

**25** *ກ. ສວນອະງຸ່ນ ຂ. ຕົນກອກ*

**26** *ກ. ກອກ ແລະ ເດື່ອເທດ ຂ. ສວນອະງຸ່ນ*

**27** *ກ. ລູກາ 13 ຂ. ມັດທາຍ 21*

**28** *ກ. ບໍ່ມີໝາກ ຂ. ມີໃບ*

**29** *ກ. ພະວິຫານ ຂ. ປ້ອຍຕົນເດື່ອເທດ*

**30** *ຄ.*

**31** *ບໍລິເວນພະວິຫານ*

**32** *ກ. ພວກປະໂລຫິດຕົນໃຫຍ່ ແລະພວກເຖົ້າແກ່ ຂ. ສິດອຳນາດຂອງພະອົງ*

**33** *ກ. ເຂົາກຸງຢ່າງຜູ້ມີໄຊ ຂ. ປ້ອຍຕົນເດື່ອເທດ ແລະຊຳລະພະວິຫານ*

**34** *ເລື່ອງໂຢຮັນບັບຕິສະໂຕ*

**35** *ກ. ຈົ່ງປະຕິບັດໃຫ້ໄດ້ຜົນສົມກັບ ການຖິ້ມໃຈເກົ່າເອົາໃຈໃໝ່.*
*ຂ. ຈະຖືກປຳ້ແລ້ວໂຍນຖິ້ມໃສ່ໄຟເສຍ.*

**36** *ກ. ມາກ ຂ. ປ້ອຍມັນ*

**37** *ກ. ຢ້ານປະຊາຊົນ ຂ. ຜູ້ປະກາດພະທຳ ຄ. ບໍ່ຕອບເລີຍ ງ. ຕອບ*

**38** *ກ. ຜູ້ທີ່ບອກວ່າຈະໄປ ແຕ່ບໍ່ໄປ ຂ. ຄົນເກັບພາສີແລະຍິງແມ່ຈ້າງ*
*ຄ. ໂຢຮັນບັບຕິສະໂຕ ງ. ສົມກັບການຖິ້ມໃຈເກົ່າເອົາໃຈໃໝ່*

**39** *ເຄືອອະງຸ່ນ ຕົນເດື່ອເທດ ແລະຕົນໝາກກອກເທດ.*

**40** *ກ. ຊາດຢິວ ຂ. ກັບການຖິ້ມໃຈເກົ່າເອົາໃຈໃໝ່*

**41** *ກ. ລູກາ 13 ຂ. ມັດທາຍ 21*

**42** *ກ. ຂຸດດິນອ້ອມ ເອົາຝຸ່ນໃສ່ ຂ. ເພິ່ນຂຸດດິນແລະປູກເບ້ຍອະງຸ່ນພັນດີໃສ່ ຄ. ຫຼາຍ*
*ງ. ບໍ່*

**43** *ຫ່ຽວແຫ້ງໄປ*

**44** *ກ. ບາບີໂລນ ຂ. 600 ກ.ຄ.ສ. ຄ. 70 ງ. ໂລມ*

**45** *ຄ.ສ.70 - 1948*

**46** *ກ. ການສະເດັດມາຂອງບຸດມະນຸດ ຂ. ແຕກໃບອ່ອນອອກ*

**47** *ຂ ຖືກ*

**48** *ກ ຄ ແລະ ງ ຖືກ*

**49** *ຈະສ້າງຄືນມາອີກ*

**ຄໍາຕອບ (ຕໍ່):**

**50** *ກ. ມີແລ້ວ ຂ. ຍັງເທື່ອ*

**51** *ພະເຢຊູຄຣິດ*

**52** *ພະເຢຊູຄຣິດ*

**53** *ຈະສ້າງເຂົາຄືນມາອີກ*

**54** *ເຊື່ອ*

**55** *ສິ່ງສາລະພັດທີ່ທູນຂໍ*

**56** *ຄ ຖືກ*

**57** *ກ. ດ້ວຍມີຄວາມເຊື່ອ ຂ. ຍົກຜິດໃຫ້ຜູ້ອື່ນ*

**58** *ເຊື່ອ... ຜິດ*

**59** *ຈະສ້າງຄືນອີກ*

**60** *ຄວາມເຊື່ອ*

**61** *(ບໍ່ມີຄໍາຕອບຕາຍຕົວ)*